# ອະນາຄົດ ຂອງ ອະດີດຕະການ ໜັງສືໃບລານລາວ ໃນຍຸກສະໄໝເຕັກໂນໂລຊີຂ່າວສານ

11


**ທອງສາ ໄຊຍະວົງຄໍາດີ**


**ບັນຫາໃຫຍ່ໆ ທີ່ກອງປະຊຸມໄດ້ຕັ້ງຂຶ້ນ ມີດັ່ງນີ້ :**

- ເຮັດວິທີໃດ ເພື່ອເຮັດໃຫ້ມໍລະດົກວັນນະຄະດີຂອງລາວ ມີຊີວິດຊີວາ ສໍາລັບຄົນຮຸ່ນນີ້ ແລະ ຮຸ່ນໜ້າ ?
- ເຮັດວິທີໃດ ເພື່ອໃຫ້ຄົນຍຸກນີ້ ໂດຍສະເພາະຊາວໜຸ່ມ ໄດ້ຮູ້ເນື້ອໃນ ແລະ ເຫັນຄຸນຄ່າສູງຂອງ ມໍລະດົກ ວັນນະຄະດີລາວ?
- ເຮັດວິທີໃດ ມໍລະດົກວັນນະຄະດີລາວ ຈຶ່ງຈະດຶງດູດຖັນແຖວນັກອ່ານ ແລະ ນັກຄົ້ນຄວ້າ ຈາກວົງການສາກົນ?

ກອງປະຊຸມພວກເຮົາໄດ້ຟັງຄໍາເຫັນຂອງນັກປາດອາຈານຫລາຍທ່ານ ແຕ່ລະຄໍາເຫັນ ກໍ່ລ້ວນແຕ່ມີຄຸນປະໂຫຍດ ຊ່ວຍໃຫ້ຊອກເຫັນຄໍາຕອບທີ່ຈະນໍາໄປສູ່ການຮວບຮວມ ເປັນທິດທາງການເຄື່ອນໄຫວໃນຕໍ່ໜ້າ. ສະເພາະຂ້າພະເຈົ້າເອງແລ້ວ ກ່ອນອື່ນໝົດ ກໍຂໍສະແດງຄວາມຂອບໃຈຢ່າງສູງ ຕໍ່ຄະນະຈັດຕັ້ງທີ່ໄດ້ເຊື້ອເຊີນໃຫ້ເຂົ້າມາຮ່ວມ ແລະ ປະກອບຄໍາຄິດຄໍາເຫັນ ແລະ ຂໍຊົມເຊີຍບັນດາທ່ານ ທີ່ໄດ້ພະຍາຍາມອອກແຮງຈັດຕັ້ງກອງປະຊຸມ ຄັ້ງນີ້ ຈົນເກີດຜົນ. ຂ້າພະເຈົ້າຂໍສະເໜີດັ່ງນີ້:

1. ຄວນສ້າງຕັ້ງສູນອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າມໍລະດົກວັນນະຄະດີລາວ
2. ຄົ້ນຄວ້າ ແລະ ຂຽນແຜນຍຸດທະສາດ ວ່າດ້ວຍການອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າ ມໍລະດົກວັນນະຄະດີລາວ ເພື່ອຂໍອະນຸມັດຈາກລັດຖະບານ
3. ຈັດຕັ້ງປະຕິບັດແຜນຍຸດທະສາດ ພາຍຫລັງໄດ້ຮັບອະນຸມັດ

**ເຫດຜົນທີ່ຮັບຮອງຄໍາສະເໜີຂ້າງເທິງນີ້ ມີຄື :**

## ໂຄງສ້າງການຈັດຕັ້ງ ແລະ ບຸກຄະລາກອນ

ຢາກເຮັດວຽກງານໃດນຶ່ງໃຫ້ເກີດຜົນ ກ່ອນອື່ນໝົດຕ້ອງແກ້ໄຂບັນຫາໂຄງສ້າງການຈັດຕັ້ງ ແລະ ຕ້ອງມີໜ່ວຍງານນຶ່ງ ເຊິ່ງອາດຈະເອີ້ນວ່າ ກອງວິຊາການ ຫລືສູນອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າວັນນະຄະດີຂອງຊາດ ໜ່ວຍງານນີ້ ເປັນອົງການຈັດຕັ້ງຂອງລັດ ໄດ້ຖືກແຕ່ງຕັ້ງຂຶ້ນຢ່າງເປັນທາງການ, ໄດ້ຮັບການມອບໝາຍສິດ ແລະ ໜ້າທີ່ຢ່າງຈະແຈ້ງ, ສ້າງບົດບາດເຮັດໃຫ້ສັງຄົມນັບນີ້ນັບຮັບຮູ້, ຮັກແພງ ແລະ ສົ່ງເສີມ, ສ້າງຜົນງານ ແລະ ຈັດຕັ້ງປະຕິບັດແຜນການຕ່າງໆ ຈົນບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້. ປັດໄຈຕັດສິນໃນໂຄງສ້າງການຈັດຕັ້ງ ກໍແມ່ນບຸກຄະລາກອນ, ຕ້ອງປະກອບພະນັກງານຜູ້ທີ່ມີລະດັບທີ່ແນ່ນອນ, ມີຄວາມຫ້າວຫັນ, ກະຕືລືລົ້ນ, ຖະໜອມຮັກວັນນະຄະດີ ແລະ ຢາກອຸທິດຊີວິດເພື່ອອາຊີບຂອງຕົນ. ກອງວິຊາການຫລືສູນນີ້ ມີທີ່ຕັ້ງ ແລະ ຖານະເທົ່າທຽມກົມກອງອື່ນໆ ພາຍໃນກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.

## ແຜນຍຸດທະສາດ

ກອງ ຫລືສູນ ຕ້ອງເປັນແກນນຳໃນການສ້າງແຜນຍຸດທະສາດ ຈາກນັ້ນກໍຕ້ອງເປັນໃຈກາງໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ ເພື່ອຂຽນແຜນຍຸດທະສາດ ພວກເຮົາຕ້ອງຢັ່ງຫາງສຽງມວນຊົນ ສົມທົບກັບການຟັງຄຳເຫັນ ແລະ ຄຳສະເໜີຂອງປັນຍາຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເກັບກຳຄຳຄິດຄຳເຫັນຂອງມວນຊົນ ເຮົາອາດຈັດຕັ້ງຫລາຍວິທີ ເຊັ່ນ: ເຮັດຄຳຖາມ - ຄຳຕອບ ແລ້ວລົງໄປຖາມປວງຊົນຕາມເປົ້າໝາຍ, ຈຳນວນ ແລະສະຖານທີ່ໆສາມາດເປັນຕົວແທນໄດ້ (ຫລັກການເກັບແບບຢ່າງຂອງວິທີສະຖິຕິ ຫລື Sampling method). ສຳລັບນັກສຶກສາ, ອາຈານສອນ ແລະ ຖັນແຖວປັນຍາຊົນອື່ນໆ ຄວນຈັດຕັ້ງສຳມະນາເປັນຫລາຍໆຊຸດ ແລະ ຄົ້ນຄວ້າບັນຫາຕ່າງໆ ເປັນຕົ້ນ ຄື:

1. ຄວາມໝາຍ ແລະ ຄຸນຄ່າຂອງ ມໍລະດົກວັນນະຄະດີ
2. ຮູບການ ແລະ ເນື້ອໃນຂອງ ມໍລະດົກວັນນະຄະດີ
3. ມໍລະດົກວັນນະຄະດີລາວ ອຸດົມຮັ່ງມີ ຫລືບໍ່ ຖ້າສົມທຽບໃສ່ວັນນະຄະດີປະເທດອື່ນໆ
4. ບົດບາດຂອງ ວັນນະຄະດີຕໍ່ບຸກຄົນ (ສ້າງຄວາມຄິດຄວາມອ່ານ, ສຶກສາອາລົມຈິດ ...)
5. ບົດບາດຂອງວັນນະຄະດີຕໍ່ສັງຄົມ (ສ້າງຄວາມສາມັກຄີພາຍໃນຊາດ ...)
6. ສັງຄົມໄດ້ຮັບຮູ້ຄຸນຄ່າ ແລະ ຈະເສີມຂະຫຍາຍຄຸນຄ່າຂອງວັນນະຄະດີແນວໃດ? (ປັດຊະຍາ, ຈັນຍາທຳ, ຈິດຕະສາດສັງຄົມ, ເອກະລັກວັດທະນະທຳ ... )

7. ສະຖານະການຂອງການປະດິດຄິດແຕ່ງ ໜັງສືວັນນະຄະດີ ຢູ່ປະເທດເຮົາເປັນແນວໃດ ?
8. ຜົນປະໂຫຍດທີ່ນັກປະພັນວັນນະຄະດີ ໄດ້ຮັບມີຫຍັງແດ່ ? (ກຽດຕິຄຸນ, ວຸດທິຄຸນ ... )
9. ຜົນປະໂຫຍດທີ່ສັງຄົມໄດ້ຮັບຈາກບົດວັນນະຄະດີ ມີຫຍັງແດ່ ? (ຄວາມອຸດົມສົມບູນຂອງວັດທະນະທຳທາງຈິດໃຈ, ວິນຍານຂອງຊາດ ... )
10. ວັນນະຄະດີ ສາມາດສ້າງຄຸນຄ່າໃໝ່ທາງວັດທະນະທຳໄດ້ຫລືບໍ່? (ຄຸນສົມບັດ ແລະ ຄ່ານິຍົມທາງສັງຄົມ ... )

ຄຳຖາມ 10 ຂໍ້ ຂ້າງເທິງນີ້ ນອກຈາກຈະເປັນຫົວຂໍ້ຄົ້ນຄວ້າລົງເລິກໃນກອງປະຊຸມສຳມະນາຕ່າງໆແລ້ວ ກໍຍັງຕ້ອງນຳອອກມາເປັນຫົວເລື່ອງສົນທະນາຖົກຖຽງໃນວົງກວ້າງ ແລະ ເປັນເນື້ອໃນຂອງວຽກງານເຜີຍແຜ່ ທີ່ກອງ ຫລືສູນນີ້ ຕ້ອງດຳເນີນໄປຢ່າງເປັນປົກກະຕິ ແລະ ຍາວນານ. ເພື່ອນຳອອກສູ່ວົງກວ້າງ ຕ້ອງມີວິທີການລະອຽດ ດັ່ງຈະກ່າວໃນຂໍ້ "ເຮັດໃຫ້ສັງຄົມມີສ່ວນຮ່ວມ".

## ສັງຄົມມີສ່ວນຮ່ວມ

- **ດ້ານການເມືອງ:** ວຽກງານອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າມໍລະດົກວັນນະຄະດີ ຕ້ອງປາກົດອອກເປັນວຽກນຶ່ງທີ່ສຳຄັນ ຢູ່ໃນແນວທາງນະໂຍບາຍຂອງພັກ, ໄດ້ຮັບຄວາມເອົາໃຈໃສ່ ເປັນຫ່ວງເປັນໃຍຈາກຜູ້ນຳ ພັກ-ລັດ ແລະ ເປັນກິດຈະກຳທີ່ອົງການຈັດຕັ້ງການເມືອງ ຖືເປັນສຳຄັນ ຍ້ອນເຫດຜົນຕ່າງໆ ເຊັ່ນວ່າ: ມໍລະດົກວັນນະຄະດີ ຢັ້ງຢືນເອກະລັກວັດທະນະທຳຂອງຊາດ, ຢັ້ງຢືນຄວາມເປັນຊາດ, ສ່ອງແສງເຖິງຫົວຄິດປະດິດສ້າງອັນແຫລມຄົມ ຂອງນັກປະພັນວັນນະຄະດີ, ສ່ອງແສງເຖິງວິນຍານຂອງຊາດ

- **ດ້ານນິຕິກຳ:** ວັນນະຄະດີ ໃນຖານະທີ່ເປັນພາກສ່ວນນຶ່ງຂອງ ມໍລະດົກວັດທະນະທຳ ຕ້ອງໄດ້ຮັບການປົກປ້ອງທາງດ້ານກົດໝາຍ ເພື່ອໃຫ້ພົນລະເມືອງ ແລະ ນິຕິບຸກຄົນປະຕິບັດສິດໜ້າທີ່ ແລະພັນທະຢ່າງຖືກຕ້ອງ. ດັ່ງນັ້ນ ຕ້ອງກຳໜົດອອກໃນລັດຖະທຳມະນູນ ແລະ ໃນກົດໝາຍວ່າດ້ວຍມໍລະດົກວັດທະນະທຳ ແລະທຳມະຊາດ ເຊິ່ງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ພວມຮ່າງຢູ່ ແລະ ຈະໄປຜ່ານລັດຖະບານ ເພື່ອນຳໄປຜ່ານສະພາແຫ່ງຊາດ ໃນປີ 2004 ນີ້

- **ດ້ານການປົກຄອງ:** ຕ້ອງເອົາແຜນຍຸດທະສາດ ອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າມໍລະດົກວັນນະຄະດີ ເຂົ້າຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ເຊິ່ງເປັນແຜນການ 5 ປີ ແລະ ເປັນແຜນການປະຕິບັດແຕ່ລະປີ. ຕ້ອງສູ້ຊົນໃຫ້ໄດ້ເອົາເຂົ້າໃນແຜນການ 5 ປີທີ່ຈະມາເຖິງ ຄື: 2004-2009

- **ດ້ານງົບປະມານ:** ຕ້ອງຂຶ້ນແຜນຂໍງົບປະມານສຳລັບແຜນການ 5 ປີ ແລະ ແຜນປະຈຳປີ. ນອກຈາກນັ້ນ ຍັງຕ້ອງສ້າງຕັ້ງ ກອງທຶນສະເພາະຂຶ້ນອີກ. ກອງທຶນຈະເປັນບ່ອນຍົບຂວາຍກຳລັງແຮງຈາກທົ່ວສັງຄົມ, ຮັບການຊ່ວຍເຫລືອຈາກສາກົນ ແລະ ເຄື່ອນໄຫວສ້າງລາຍຮັບໃຫ້ຕົນເອງແນໃສ່ສ້າງກຳລັງແຮງທາງການເງິນ ເພື່ອສ້າງຖານະ ແລະ ເປັນເຈົ້າການປະຕິບັດແຜນການໄລຍະຍາວ ແລະ ໄລຍະສັ້ນຂອງກອງ ຫລືສູນ

- **ດ້ານໂຄງສ້າງການຈັດຕັ້ງ:** ຕ້ອງສ້າງຕັ້ງກອງ ຫລືສູນ ສົ່ງເສີມຖານະ ແລະ ບົດບາດ ໃຫ້ນັບມື້ນັບສູງເດັ່ນຂຶ້ນ ຈົນໄດ້ຮັບຄວາມເຊື່ອຖື ໄວ້ວາງໃຈ ແລະ ຮັກແພງຈາກທົ່ວສັງຄົມ

- **ດ້ານກົນໄກການເຄື່ອນໄຫວ:** ຕ້ອງມີກົນໄກການເຄື່ອນໄຫວປະສານງານ ກັບອົງການຈັດຕັ້ງອື່ນໆໃນພາກລັດ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນຕ່າງໆ ຢ່າງມີປະສິດທິຜົນ

- **ດ້ານພື້ນຖານວັດຖຸ, ເຕັກນິກ ແລະ ອຸປະກອນ:** ຕ້ອງສ້າງ ແລະ ຂະຫຍາຍໂຄງຮ່າງພື້ນຖານພ້ອມປະກອບວັດຖຸເຕັກນິກອຸປະກອນຕ່າງໆ ສ້າງຕຶກອາຄານທີ່ສາມາດຮອງຮັບໜ້າທີ່ຕ່າງໆ ເຊັ່ນ: ມີສາງທັນສະໄໝເກັບມ້ຽນໜັງສືເກົ່າແກ່, ຫ້ອງເກັບມ້ຽນໄມໂຄຼຟິມ, ຫ້ອງບໍລິຫານການອ່ານຂອງມວນຊົນ, ຫ້ອງວາງສະແດງ, ຫ້ອງສາທິດ, ຫ້ອງຄົ້ນຄວ້າວິໄຈ, ຫ້ອງສ້າງເອກະສານຄຸ້ມຄອງໜັງສືໃບລານ, ຫ້ອງປະຊຸມສຳມະນາ, ຫ້ອງເຮັດການ ແລະ ອື່ນໆ. ມີຕູ້ເກັບມ້ຽນ ແລະ ອຸປະກອນເຕັກນິກທີ່ຈຳເປັນ, ມີລະບົບເຄື່ອງຄອມພິວເຕີ ຕິດຕໍ່ອິນເຕີແນັດ

- **ດ້ານຕິດຕໍ່ສຳພັນກັບອົງການຕ່າງໆ ພາຍໃນ ແລະ ພາຍນອກ:** ຄວນສ້າງຕັ້ງສະມາຄົມນັກອະນຸຮັກ ແລະ ເຜີຍແຜ່ເສີມຂະຫຍາຍຄຸນຄ່າຂອງມໍລະດົກວັນນະຄະດີ ຈັດຕັ້ງສະໂມສອນພາຍໃນໂຮງຮຽນຂັ້ນຕ່າງໆ ປະສານງານກັບອົງການພະສົງລາວ, ແນວໂຮມ, ສະຫະພັນແມ່ຍິງ, ຊາວໜຸ່ມ, ໂຮງຮຽນສົງ. ສົ່ງເສີມການອ່ານໜັງສືວັນນະຄະດີ ໃນການຄົບງັນບຸນປະເພນີ, ງານເຮືອນກຳ, ເຮືອນດີ ແລະ ອື່ນໆ

**ດ້ານໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ :**

- ປະສານສົມທົບກັບກົມຄົ້ນຄວ້າຫລັກສູດແບບຮຽນ ແລະ ກົມກໍ່ສ້າງຄູ ຂອງກະຊວງສຶກສາ ເອົາເນື້ອໃນວັນນະຄະດີເຂົ້າຫລັກສູດແບບຮຽນແຕ່ລະຊັ້ນ ແຕ່ລະປະເພດ ແຕ່ສາມັນຮອດວິຊາສະເພາະ
- ໄຂຊຸດອົບຮົມຍົກລະດັບຄູວັນນະຄະດີ ໃນແຕ່ລະຂັ້ນ ເພື່ອຍົກສູງການສິດສອນ ເນື້ອໃນວັນນະຄະດີເກົ່າແກ່
- ສ້າງຕັ້ງວາລະສານ ວັນນະຄະດີເກົ່າແກ່ ຫລືປັບປຸງວັນນະຄະດີວັນນະສິນ ໂດຍມີນັກຂຽນຂອງສູນອະນຸຮັກ ວັນນະຄະດີເກົ່າແກ່ ເຂົ້າເພີ່ມເຕີມ
- ສ້າງລາຍການວິທະຍຸ, ໂທລະພາບ, ສ້າງ CD ແລະ VDO
- ຂຽນບົດຄວາມລົງໜັງສືພິມ ແລະ ວາລະສານຕ່າງໆ
- ຈັດຕັ້ງກອງປະຊຸມແຂ່ງຂັນດ້ານອະນຸຮັກ, ເສີມຂະຫຍາຍຄຸນຄ່າມໍລະດົກວັນນະຄະດີລາວ ໃນຂັ້ນຕ່າງໆ ເຊັ່ນ ຢູ່ໂຮງຮຽນ ແລະ ຢູ່ສູນ ຫລືກອງອະນຸຮັກ ແລະ ເສີມຂະຫຍາຍຄຸນຄ່າວັນນະຄະດີລາວ
- ຈັດຕັ້ງລາຍການປະກວດຜູ້ຄົ້ນຄວ້າ, ພິມປຶ້ມ ແລະ ເຜີຍແຜ່ວັນນະຄະດີ
- ຈັດຕັ້ງພິທີຍ້ອງຍໍຜູ້ທີ່ມີຜົນງານ ສົມທົບກັບການເຄື່ອນໄຫວຕ່າງໆ ເພື່ອສ້າງລາຍຮັບ
- ສຶກສາອົບຮົມໃຫ້ບຸກຄົນ ແລະ ສັງຄົມ ເຫັນວ່າ ວັນນະຄະດີມີຜົນປະໂຫຍດ ສິ່ງເສີມນັບສະໝອງໃນການຄົ້ນຄິດ, ຝຶກຝົນຈິນຕະນາການ ແລະ ຫົວຄິດປະດິດຄິດສ້າງທາງສິລະປະວັດທະນະທຳ
- ສຶກສາອົບຮົມໃຫ້ເຫັນວ່າ ວັນນະຄະດີ ສາມາດປະກອບສ່ວນສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ໃນວົງຄະນາຍາດແຫ່ງຊາດ
- ສຶກສາອົບຮົມໃຫ້ເຫັນວ່າ ວັນນະຄະດີ ສາມາດກາຍເປັນຜະລິດຕະພັນ ຫລືມີຄຸນຄ່າ ສ້າງຈັນຍາທຳ ໃຫ້ຄົນໃນທົ່ວສັງຄົມ ແລະ ນອກຈາກນັ້ນ ກໍສາມາດກາຍເປັນຜະລິດພັນວັດທະນະທຳ ທີ່ມີຄຸນປະໂຫຍດທາງເສດຖະກິດ ຄື ສ້າງລາຍຮັບໃຫ້ປະເທດຊາດ ແລະໃຫ້ບຸກຄົນຜູ້ຄົ້ນຄິດປະດິດແຕ່ງນິຍາຍເລື່ອງຕ່າງໆ ທີ່ຜະລິດເປັນປຶ້ມ, ເປັນລະຄອນ ຫລືຟິມຕ່າງໆ
- ສຶກສາອົບຮົມໃຫ້ທົ່ວສັງຄົມມີຄວາມພາກພູມໃຈ ເອກອ້າງທະນົງໃຈຕໍ່ວັນນະຄະດີຂອງຕົນ ທີ່ອຸດົມຮັ່ງມີ ແລະ ມີຄຸນຄ່າສູງ ສະແດງເຖິງຄວາມຈະເລີນສີວິໄລທາງດ້ານຈິດໃຈ, ທາງດ້ານປັດຊະຍາ, ຄວາມຮູ້ຈັນຍາທຳ ຄຸນສົມບັດ ແລະ ອື່ນໆ

- ຈັດຕັ້ງສຳມະນາ ແລະ ສ້າງສາຍພົວພັນກັບນັກຄົ້ນຄວ້າຕ່າງປະເທດ ທີ່ສົນໃຈວັນນະຄະດີເກົ່າແກ່ຂອງລາວ

ເນື້ອໃນທີ່ຂ້າພະເຈົ້າໄດ້ສະເໜີມາຂ້າງເທິງນີ້ ແມ່ນຄຳຄິດຄຳເຫັນສ່ວນຕົວແບບວິຊາການ ບໍ່ໄດ້ຕາງໜ້າໃຫ້ກົມກອງໃດນຶ່ງ, ຄຳເຫັນນີ້ອາດມີລັກສະນະວິໄສທັດຂອງພະນັກງານບໍລິຫານລັດຜູ້ນຶ່ງ ແຕ່ຖ້າຫາກກອງປະຊຸມເຫັນວ່າມີສິ່ງທີ່ດີ ກໍສະເໜີເອົາໄປຄົ້ນຄວ້າ ແລະ ນຳໃຊ້ຕາມເງື່ອນໄຂ ແລະ ສະພາບການຕົວຈິງ. ຂ້າພະເຈົ້າຄຶດວ່າ ໃນອະນາຄົດ ຖ້າພວກເຮົາຈັດຕັ້ງປະຕິບັດໄດ້ຄືແບບນີ້ ມັນຈະເປັນການສ້າງເງື່ອນໄຂທີ່ອຳນວຍຄວາມສະດວກ ໃຫ້ໂຄງການໃບລານຂອງພວກເຮົາ ເສີມຂະຫຍາຍຜົນງານທີ່ໄດ້ສ້າງມາແລ້ວໃຫ້ຫລວງຫລາຍ ແລະ ຍິ່ງໃຫຍ່ໄປໜ້າເລື້ອຍໆ

ກ່ອນຈະໝົດຄຳເຫັນ ຂ້າພະເຈົ້າຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍສັນລະເສີນຢ່າງສຸດອົກສຸດໃຈຕໍ່ຜົນງານຂອງນັກວິຊາການລາວ ແລະ ຕ່າງປະເທດ, ການປະກອບສ່ວນຂອງປະຊາຊົນບ້ານຕ່າງໆ, ການຊ່ວຍເຫລືອຂອງມູນນິທິໂຕໂຍຕາ ແລະ ຂອງລັດຖະບານເຢຍຣະມັນ ທີ່ໄດ້ເຮັດໃຫ້ ໂຄງການໃບລານດຳເນີນໄປຢ່າງມີຜົນສຳເລັດຕະຫລອດໄລຍະ 15 ປີຜ່ານມາ.

ຂ້າພະເຈົ້າຖືວ່າ ຜົນງານເຫລົ່ານັ້ນ ມີຄຸນຄ່າອັນສູງ ແລະ ມີຄວາມໝາຍສຳຄັນ ປະກອບສ່ວນເຂົ້າໃນການປົກປັກຮັກສາມູນມໍລະດົກ ວັດທະນະທຳຂອງຊາດ ໃນຂອບເຂດທົ່ວປະເທດ ໂດຍສັງຄົມໄດ້ເຂົ້າຮ່ວມຢ່າງກວ້າງຂວາງ.